ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ປີ 2022 ການເຂົ້າເຖິງການບໍລິການດ້ານການເງິນໃນລາວ (ມີຄຳຕອບ).




ກອງປະຊຸມດັ່ງກ່າວ ມີຄູ່ຮ່ວມງານຕ່າງໆ ທີ່ເຮັດວຽກໃນຂະແໜງການເງິນຈຸລະພາກຂອງ ສປປ ລາວ ໄດ້ນຳສະເໜີ ແລະ ປຶກສາຫາລື ກ່ຽວກັບທ່າອ່ຽງ, ແນວທາງປະຕິບັດ ແລະ ການດຳເນີນການ ທີ່ກ່ຽວຂ້ອງກັບຂະແໜງການ ທີ່ຈະພິຈາລະນາຢ່າງເລິກເຊິ່ງໂດຍເນັ້ນໃຫ້ຂະແໜງການປຶກສາຫາລືກ່ຽວກັບຄຸນນະພາບ ແລະ ຄວາມໜ້າເຊື່ອຖືຂອງການບໍລິຫານການດຳເນີນງານທາງດ້ານການເງິນ ແລະ ສັງຄົມ, ພ້ອມການລາຍງານຜົນຂອງການດຳເນີນງານທັງສອງດ້ານ ທີ່ກ່ຽວຂ້ອງກັບຄວາມສະເໝີພາບ ແລະຄວາມຍືນຍົງໃນອະນາຄົດ.

ການປະຊຸມຈັດຕັ້ງເປັນ 4 ເວທີສົນທະນາ ທີ່ປິ່ນອ້ອມການກ້າວສູ່ອະນາຄົດທີ່ມີຄວາມສະເໝີພາບ ແລະ ມີຄວາມຍືນຍົງ ຊຶ່ງບໍ່ພຽງແຕ່ຕ້ອງການສະຖາບັນການເງິນ ທີ່ເຂັ້ມແຂງດ້ານການເງິນເທົ່ານັ້ນ, ແຕ່ຍັງຕ້ອງການສະຖາບັນທີ່ມີຄວາມໂປ່ງໃສ, ມີຄວາມຮັບຜິດຊອບຕໍ່ສັງຄົມ; ຄວາມນິຍົມໃນການນຳໃຊ້ເຕັກໂນໂລຊີທາງດ້ານການເງິນ ຄວບຄູ່ໄປກັບຜົນກະທົບທີ່ເດັ່ນຊັດ ແລະ ຄວາມຮູ້ສຶກເຖິງຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ທີ່ຈະນຳເອົາໂອກາດ ແລະ ໄພຂົ່ມຂູ່ນັ້ນໆມາໝູນ ໃຊ້ໃຫ້ເກີດປະໂຫຍດທີ່ດີຂຶ້ນ.

ຂະແໜງການທີ່ເຮັດວຽກ ເພື່ອກຳນົດການດຳເນີນການທີ່ເໝາະສົມ ແລະ ນຳໃຊ້ປະໂຫຍດຈາກໂອກາດທີ່ພົ້ນເດັ່ນຂຶ້ນເຊັ່ນ: ການເງິນສີຂຽວ ແລະ ການບໍລິການທາງດ້ານການເງິນດິຈິຕອລ ເພື່ອຊອກຫາວິທີແກ້ໄຂ ທີ່ຈະຊ່ວຍໃຫ້ລູກຄ້າຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ໃຫ້ມີຄວາມສ່ຽງໜ້ອຍ ແລະ ມີຄວາມຍືດຍຸ່ນຫຼາຍຂຶ້ນ. ພາຍໃຕ້ຫົວຂໍ້ໃນປີນີ້ໄດ້ເນັ້ນໜັກເຖິງ “ກ້າວສູ່ອະນາຄົດ ທີ່ມີຄວາມສະເໝີພາບ ແລະ ມີຄວາມຍືນຍົງ: ຮັບປະກັນໃຫ້ມີຮູບແບບການສະໜອງການບໍລິການດ້ານການເງິນ ທີ່ມີຄວາມຮັບຜິດຊອບທາງດ້ານສັງຄົມ ແລະ ມີຄວາມໜ້າເຊື່ອຖື” ເຊິ່ງຈະນຳເອົາບັນດາຜູ້ຊ່ຽວຊານ, ຜູ້ຈັດຕັ້ງປະຕິບັດ ແລະ ບັນດາກະຊວງຕ່າງໆຂອງລັດ ລວມເຖິງບັນດາຜູ້ຄຸ້ມຄອງ ເພື່ອກຳນົດການປະຕິບັດ ແນ່ໃສ່ການໃຫ້ບໍລິການທາງການເງິນທີ່ມີຄວາມສະເໝີພາບ ແລະ ມີຄວາມຍືນຍົງ;

ກອງປະຊຸມປະຈໍາປີນີ້ ໄດ້ຍົກໃຫ້ເຫັນບັນດາປະເດັນຕ່າງໆທີ່ກ່ຽວຂ້ອງ ທີ່ສະຖາບັນການເງິນຈຸລະພາກ ຕ້ອງປະເຊີນ ເພື່ອໃຫ້ສາມາດຕອບສະໜອງຄວາມຕ້ອງການ ແນໃສ່ການໃຫ້ບໍລິການທາງການເງິນ ທີ່ມີຄວາມສະເໝີພາບ ແລະ ມີຄວາມຍືນຍົງ ໂດຍສະເພາະຂະແໜງການ ທີ່ສາມາດມີບົດບາດສໍາຄັນ ແລະ ປະກອບສ່ວນຊ່ວຍເຫຼືອລູກຄ້າ MSMEs, ຊຸມຊົນໃນຊົນນະບົດຮັບມືກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດທີ່ເຮັດໃຫ້ເກີດຄວາມສ່ຽງ; ໃນຂະນະດຽວກັນກໍ່ສັງເກດເຫັນວ່າສາມາດໃຊ້ເຕັກໂນໂລຊີດິຈິຕອລ ໄດ້ແນວໃດ, ໂດຍສະເພາະ, ໃນກອງປະຊຸມສາມາດຮັບຮູ້ເຖິງຂະແໜງການຈະຮັບປະກັນຄຸນນະພາບ ແລະຄວາມໜ້າເຊື່ອຖືໃນການລາຍງານການດໍາເນີນງານທາງດ້ານການເງິນ ແລະ ສັງຄົມຂອງສະມາຄົມການເງິນຈຸລະພາກ (ສກຈ), ຕົວຊີ້ວັດທີ່ກ່ຽວຂ້ອງຂອງການດໍາເນີນງານທາງດ້ານການເງິນ ແລະ ສັງຄົມທີ່ຜູ້ຄຸ້ມຄອງຕ້ອງໃຊ້ໃນການຕິດຕາມ, ການກວດສອບພາຍນອກສາມາດສະໜັບສະໜູນຂະແໜງການໃນການບັງຄັບໃຊ້ເພື່ອຄຸນນະພາບການ ລາຍງານທາງການເງິນ ແລະ ການບໍລິຫານ ສກຈ ເພື່ອລະບຸຊ່ອງຫວ່າງ ແລະ ປັບປຸງການສະໜອງການບໍລິການທາງດ້ານການເງິນ; ຜົນສໍາເລັດ ແລະ ບົດຮຽນທີ່ຖອດຖອນໄດ້ໃນຂະແໜງການ ໃນການສະໜັບສະໜູນລູກຄ້າ ໂດຍສະເພາະ MSMEs ເພື່ອປະກອບສ່ວນເຂົ້າໃນການຟື້ນຟູເສດຖະກິດພາຍຫຼັງໂຄວິດ-19; ສະພາບການປະຕິບັດໃນປະຈຸບັນຂອງຂະແໜງການກ່ຽວກັບການເງິນສີຂຽວ, ການເງິນກະສິກໍາ/MSMEs ແລະ ການເງິນດິຈິຕອລ ມີການເຊື່ອມໂຍງກັບການເງິນສີຂຽວໃນການເຮັດໃຫ້ລູກຄ້າ ໂດຍສະເພາະ MSMEs ສາມາດຮັບມືກັບຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດ.

ກອງປະຊຸມດັ່ງກ່າວ ຈັດໂດຍສະມາຄົມການເງິນຈຸລະພາກ (ສມກຈ) ຮ່ວມກັບທະນາຄານແຫ່ງ ສປປ ລາວ (ທຫລ) ໃນວັນທີ 15 ພະຈິກ 2022 ທີ່ໂຮງແຮມ ຄຣາວພລາຊາ, ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ພູຊົງ ຈັນທະຈັກ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ ທຫລ; ມີທ່ານ ສົມພອນ ສີແສງລັດ ປະທານ ສມກຈ, ທ່ານ ນາງ ປະມອນ ເພັດທານີ ຜູ້ອໍານວຍການ ສມກຈ ພ້ອມດ້ວຍພະນັກງານພາກລັດ, ພາກທຸລະກິດ, ຜູ້ປະກອບການ ແລະ ສະມາຊິກ ສມກຈ ເຂົ້າຮ່ວມ.

# ຂ່າວ: ຣັດສະໝີ ດວງສັດຈະ




*ຄົນລາວຮັກເມືອງລາວໃຊ້ເງິນກີບລາວ*